ສະບັບ ທີ 2 | ມິຖຸນາ 2019

# ສະພາບຄວາມຍາກງ່າຍ ໃນການດຳເນີນທຸລະກິດ ໃນ ສປປ ລາວ 2018-2019

ຄະແນນ

51.26 / 100

ອັນດັບ

154 / 190

ຕາຕະລາງສົມທຽບ
ຄະແນນ ແລະ ອັນດັບ ຄວາມຍາກງ່າຍ
ໃນການດຳເນີນທຸລະກິດ ອີງຕາມແຕ່ລະຕົວຊີ້ວັດ

| | | 2018 | 2019 |
|---|---|---|---|
| | ພາບລວມ (ຄະແນນ) | 53.01 | 51.26 ▼ |
| | ພາບລວມ (ອັນດັບ) | 141 | 154 ▼ |
| 1 | ການເລີ່ມຕົ້ນທຸລະກິດ (ຄະແນນ) | 72.56 | 60.93 ▼ |
| | (ອັນດັບ) | 164 | 180 ▼ |
| 2 | ການຂໍອະນຸຍາດປຸກສ້າງ (ຄະແນນ) | 75.25 | 67.94 ▼ |
| | (ອັນດັບ) | 40 | 99 ▼ |
| 3 | ການຂໍຕິດຕັ້ງໄຟຟ້າ (ຄະແນນ) | 52.65 | 52.77 ▲ |
| | (ອັນດັບ) | 149 | 156 ▼ |
| 4 | ການຈົດທະບຽນຊັບສິນ (ຄະແນນ) | 69.55 | 64.93 ▼ |
| | (ອັນດັບ) | 65 | 85 ▼ |
| 5 | ການເຂົ້າເຖິງສິນເຊື່ອ (ຄະແນນ) | 55 | 60 ▲ |
| | (ອັນດັບ) | 77 | 73 ▲ |
| 6 | ການປົກປ້ອງຜູ້ລົງທຶນລາຍຍ່ອຍ (ຄະແນນ) | 31.67 | 31.67 |
| | (ອັນດັບ) | 172 | 174 ▼ |
| 7 | ການຊຳລະອາກອນ (ຄະແນນ) | 54.18 | 54.22 ▲ |
| | (ອັນດັບ) | 156 | 155 ▲ |
| 8 | ການຄ້າລະຫວ່າງປະເທດ (ຄະແນນ) | 62.98 | 78.12 ▲ |
| | (ອັນດັບ) | 124 | 76 ▲ |
| 9 | ການບັງຄັບໃຊ້ສັນຍາ (ຄະແນນ) | 56.22 | 41.99 ▼ |
| | (ອັນດັບ) | 97 | 162 ▼ |
| 10 | ການແກ້ໄຂການລົ້ມລະລາຍ (ອັນດັບ) | 168 | 168 |

ສະໜັບສະໜູນໂດຍ

WORLD BANK GROUP
IFC International Finance Corporation

Trade for Development
www.t4dlaos.org

# ພາບລວມ

## ພາບລວມການປັບປຸງຄວາມຍາກງ່າຍໃນການດຳເນີນທຸລະກິດ ຕັ້ງແຕ່ເດືອນ ເມສາ 2018 - ມິຖຸນາ 2019

ບົດລາຍງານຄວາມສະດວກ ໃນການດຳເນີນທຸລະກິດຂອງທະນາຄານໂລກ ນຳສະເໜີມາດຕະຖານຂອງບັນດາກົດລະບຽບ ທີ່ຄຸ້ມຄອງພາກທຸລະກິດ ແລະ ຜົນບັງຄັບໃຊ້ກົດລະບຽບເຫຼົ່ານັ້ນ ໃນ 190 ປະເທດທົ່ວໂລກ.

ບົດລາຍງານນີ້ ໄດ້ສະແດງໃຫ້ເຫັນສະພາບແວດລ້ອມຂອງການດຳເນີນທຸລະກິດດ້ານນິຕິກຳ ແລະ ຂັ້ນຕອນຕ່າງໆ ວ່າມີຄວາມຍາກງ່າຍແນວໃດ ໂດຍວິທີການເກັບກຳຂໍ້ມູນ ແລະ ການວິໄຈເຊີງເລິກ ເພື່ອປຽບທຽບສະພາບແວດລ້ອມຂອງການດຳເນີນທຸລະກິດໃນຫຼາຍປະເທດ.

ບົດລາຍງານດັ່ງກ່າວ ຍັງຊ່ວຍຊຸກຍູ້ໃຫ້ປະເທດຕ່າງໆ ກໍ່ຄື ສປປ ລາວ ມີການແຂ່ງຂັນດ້ານລະບຽບການ ໃຫ້ມີປະສິດທິພາບ ຫຼື ມີມາດຕະຖານທີ່ສາມາດວັດແທກໄດ້.

# 11 ຂົງເຂດຂອງລະບຽບການ ດ້ານທຸລະກິດ ທີ່ປະເມີນໂດຍ ບົດລາຍງານການດຳເນີນທຸລະກິດ ກະທົບຕໍ່ບໍລິສັດ ໃນຕະຫລອດວົງຈອນຊີວິດຂອງການດຳເນີນທຸລະກິດ



# ບົດລາຍງານການດຳເນີນທຸລະກິດ ປະເມີນຫຍັງ?

ເນັ້ນໃສ່ການປະເມີນ ລະບຽບການ ທີ່ກ່ຽວຂ້ອງກັບວົງຈອນຊີວິດຂອງທຸລະກິດພາຍໃນປະເທດ ຂະໜາດນ້ອຍ ຫາ ຂະໜາດກາງ.

ປະເມີນບົນພື້ນຖານການກຳນົດເປັນກໍລະນີສຶກສາທີ່ມີມາດຕະຖານການປະເມີນສະເພາະ.

ປະເມີນ ຢູ່ ເມືອງທຸລະກິດ ທີ່ໃຫຍ່ທີ່ສຸດ ໃນແຕ່ລະປະເທດເສດຖະກິດ ແລະ ເມືອງທຸລະກິດ ທີ່ໃຫຍ່ທີ່ສຸດອັນດັບສອງໃນບັນດາປະເທດ ທີ່ມີປະຊາກອນຫລາຍກວ່າ 100 ລ້ານຄົນ ໃນປີ 2013.

# ການດຳເນີນທຸລະກິດໄດ້ເກັບກຳ ແລະ ຢັ້ງຢືນຂໍ້ມູນ ດ້ວຍວິທີໃດ?

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| ພະຈິກ | ທັນວາ | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ |

**ສ້າງແບບສອບຖາມ**

ທີມງານສ້າງບົດລາຍງານການດຳເນີນທຸລະກິດ ປັບປຸງແບບສອບຖາມ, ປຶກສາຫາລືກັບຜູ້ຊ່ຽວຊານ ພາຍໃນ ແລະ ພາຍນອກ

**ເກັບກຳ ແລະ ວິເຄາະຂໍ້ມູນ**

ທີມງານສ້າງບົດລາຍງານການດຳເນີນທຸລະກິດ ແຈກຢາຍແບບສອບຖາມ ແລະ ວິເຄາະກົດໝາຍ ແລະ ນິຕິກຳ ທີ່ກ່ຽວຂ້ອງ ແລະ ຂໍ້ມູນທີ່ໄດ້ຈາກແບບສອບຖາມ.

ທີມງານສ້າງບົດລາຍງານການດຳເນີນທຸລະກິດເດີນທາງຫຼາຍກວ່າ 30 ປະເທດ ເພື່ອເກັບກຳຂໍ້ມູນ.

ທີມງານສ້າງບົດລາຍງານການດຳເນີນທຸລະກິດ ໄດ້ເຂົ້າຫາຜູ້ຈັດຕັ້ງປະຕິບັດທັງ ພາກລັດ ແລະ ເອກະຊົນ ຜ່ານຊ່ອງທາງໂທລະສັບ, ປະຊຸມທາງໄກຜ່ານວິດີໂອ, ແລະ ພົບປະເຊິ່ງໜ້າ.

ລັດຖະບານ ແລະ ທີມງານກຸ່ມທະນາຄານໂລກປະຈຳພາກພື້ນ ສົ່ງຂໍ້ມູນກ່ຽວກັບການປ່ຽນແປງດ້ານນິຕິກຳ ທີ່ມີແນວໂນ້ມຈະຖືກພິຈາລະນາຈັດເຂົ້າເປັນການປັບປຸງ ດ້ານນິຕິກຳໄດ້.

**ຢັ້ງຢືນ ຂໍ້ມູນ**

ທີມງານສ້າງບົດລາຍງານການດຳເນີນທຸລະກິດ ແລກປ່ຽນຂໍ້ມູນເບື້ອງຕົ້ນດ້ານການປັບປຸງໃຫ້ ກຸ່ມທະນາຄານໂລກ ທີ່ປະຈຳພາກພື້ນ ເພື່ອຂໍຄຳເຫັນ.

ທີມງານສ້າງບົດລາຍງານການດຳເນີນທຸລະກິດ ວິເຄາະຂໍ້ມູນ ແລະ ຮ່າງບົດລາຍງານ. ຮັບເອົາຄຳເຫັນ ຕໍ່ຂໍ້ມູນ ແລະ ບົດລາຍງານ ທີ່ມາຈາກຫ້ອງການຂອງກຸ່ມທະນາຄານໂລກ ຢູ່ແຕ່ລະເຂດ ໂດຍຜ່ານຂະບວນການທົບທວນພາຍໃນ.

**ເຜີຍແຜ່ບົດລາຍງານ**

ຈັດພິມບົດລາຍງານ ຕິດຕາມດ້ວຍ ການອອກສື່ໂຄສະນາແລະການເຜີຍແຜ່ຜົນຂອງການສຶກສາ.

# 1.




## ການເລີ່ມຕົ້ນທຸລະກິດ

ຂະແໜງ ອຸດສາຫະກຳ ແລະ ການຄ້າ ໄດ້ປະສານກັບຂະແໜງການກ່ຽວຂ້ອງ ປັບປຸງຕົວຊີ້ວັດ 1 “ການເລີ່ມຕົ້ນທຸລະກິດ” ຕາມຄຳສັ່ງ 02/ນຍ. ມາເຖິງປະຈຸບັນສາມາດຫລຸດຂັ້ນຂອດ ຈາກ 10 ຂອດ ມາເປັນ 4 ຂອດ (1. ການຂຶ້ນທະບຽນວິສາຫະກິດ; 2. ການຄວັດຕາປະທັບ; 3. ການຈົດທະບຽນປະກັນສັງຄົມ ແລະ 4. ການຈົດທະບຽນອາກອນມູນຄ່າເພີ່ມ) ແລະ ເວລາທີ່ໃຊ້ໃນການເລີ່ມຕົ້ນທຸລະກິດປະຈຸບັນ ແມ່ນ ບໍ່ເກີນ 40 ວັນ ຈາກ 174 ວັນ.

### 1.1




ອອກທະບຽນວິສາຫະກິດ ພ້ອມກັບ ຕົວເລກປະຈຳຕົວຜູ້ເສຍອາກອນ (TIN) ຢູ່ຂະແໜງອຸດສາຫະກຳ ແລະ ການຄ້າ ຜ່ານການເຊື່ອມໂຍງລະບົບຄຸ້ມຄອງທະບຽນວິສາຫະກິດ ເຂົ້າກັບລະບົບຄຸ້ມຄອງການຈັດເກັບລາຍຮັບສ່ວຍສາອາກອນ ທີ່ເອີ້ນວ່າ “TaxRis” ຊຶ່ງໄດ້ເລີ່ມຈັດຕັ້ງປະຕິບັດຕັ້ງແຕ່ ກາງເດືອນຕຸລາ 2018 ເປັນຕົ້ນມາ. ໃບທະບຽນວິສາຫະກິດຮູບແບບໃໝ່ ທີ່ມີຕົວເລກປະຈຳຕົວຜູ້ເສຍອາກອນນີ້ ແມ່ນສາມາດຈັດຕັ້ງປະຕິບັດໃນ 18 ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ 108 ເມືອງ ໃນຂອບເຂດທົ່ວປະເທດ.

**(ອີງຕາມໜັງສື ສະບັບເລກທີ 1756/ກທຄວ.ອຄ, ລົງວັນທີ 12 ທັນວາ 2018 ເລື່ອງການນຳໃຊ້ “ໃບທະບຽນວິສາຫະກິດ” ຮູບແບບປັບປຸງໃໝ່ ແລະ ແຈ້ງການ ສະບັບເລກທີ 0489/ ຫກງ, ລົງວັນທີ 05 ມີນາ 2019 ເລື່ອງການອອກເລກປະຈຳຕົວຜູ້ເສຍອາກອນ)**

### 1.2



ແຍກການຂໍໃບອະນຸຍາດດຳເນີນທຸລະກິດ ອອກ ເປັນຂອດຕ່າງຫາກຈາກຂອດການຂຶ້ນທະບຽນວິສາຫະກິດ ຊຶ່ງໄດ້ຈັດຕັ້ງປະຕິບັດຕັ້ງແຕ່ເດືອນ ກຸມພາ 2019 ເປັນຕົ້ນໄປ. ນັກລົງທຶນສາມາດ ເຄື່ອນໄຫວທຸລະກິດຕາມໃບອະນຸຍາດດຳເນີນທຸລະກິດ ຫລື/ແລະ ໃບອະນຸຍາດລົງທຶນຈາກຂະແໜງການທີ່ກ່ຽວຂ້ອງ. ພ້ອມນັ້ນ, ການຈົດທະບຽນກົດລະບຽບ ແລະ ຊັບສິນ ໄດ້ຖືກຍົກໄປຢູ່ຂັ້ນຕອນຫລັງໄດ້ຮັບອະນຸຍາດດຳເນີນທຸລະກິດ.

**(ອີງຕາມຂໍ້ຕົກລົງ ສະບັບເລກທີ 0023/ອຄ.ກຄທວ, ລົງວັນທີ 05 ມີນາ 2019 ວ່າດ້ວຍການຂຶ້ນທະບຽນວິສາຫະກິດ ແລະ ແຈ້ງ ການ ສະບັບເລກທີ 1618/ກງ, ລົງວັນທີ 30 ພຶດສະພາ 2019 ເລື່ອງການປັບປຸງກົນໄກ, ຂັ້ນຕອນ ການດຳເນີນງານລະຫວ່າງ ການຈົດທະບຽນເອກະສານຂອງຂະແໜງຊັບສິນ ແລະ ການອອກທະບຽນອາກອນ)**

## 1.3



ລົບລ້າງການອອກອະນຸຍາດປ້າຍຊື່ວິສາຫະກິດ ໝາຍຄວາມວ່າພາຍຫລັງທີ່ໄດ້ຮັບການຂຶ້ນທະບຽນສ້າງຕັ້ງວິສາຫະກິດ ສາມາດນຳເອົາໃບທະບຽນວິສາຫະກິດ ໄປຜະລິດປ້າຍຊື່ວິສາຫະກິດໄດ້ເລີຍ.

**(ອີງຕາມ ແຈ້ງການ ສະບັບເລກທີ 2823/ທອຄ.ກທຄວ, ລົງວັນທີ 26 ພະຈິກ 2018 ເລື່ອງການຄວັດຕາປະທັບວິສາຫະກິດ ແລະ ປ້າຍຊື່ ວິສາຫະກິດ)**

## 1.4



ລົບລ້າງການຂໍອະນຸຍາດຄວັດຕາປະທັບຈາກຂະແໜງອຸດສາຫະກຳ ແລະ ການຄ້າ. ພາຍຫລັງໄດ້ຮັບການຂຶ້ນທະບຽນວິສາຫະກິດ, ສາມາດນຳເອົາໃບທະບຽນວິສາຫະກິດໄປຄວັດຕາປະທັບກັບຂະແໜງການປ້ອງກັນຄວາມສະຫງົບ. ພ້ອມນັ້ນ, ການຂຶ້ນທະບຽນນຳໃຊ້ຕາປະທັບ ແມ່ນອອກພ້ອມກັບຂອດຄວັດຕາປະທັບ ໃນຂອບເຂດທົ່ວປະເທດ.

**(ອີງຕາມຂໍ້ຕົກລົງ ສະບັບເລກທີ 1748/ປກສ.ກຄທວ, ລົງວັນທີ 02 ຕຸລາ 2018 ວ່າດ້ວຍການຄຸ້ມຄອງ ແລະ ຜະລິດຕາປະທັບວິສາຫະກິດ ແລະ ແຈ້ງການ ສະບັບເລກທີ 2823/ທອຄ.ກທຄວ, ລົງວັນທີ 26 ພະຈິກ 2018 ເລື່ອງການຄວັດຕາປະທັບວິສາຫະກິດ ແລະ ປ້າຍຊື່ວິສາຫະກິດ)**

## 1.5



ລົບລ້າງການຢັ້ງຢືນທີ່ຕັ້ງສຳນັກງານ

**(ອີງຕາມໜັງສື ສະບັບເລກທີ 1596/ກທຄວ, ລົງວັນທີ 15 ພະຈິກ 2018 ເລື່ອງລົບລ້າງການນຳໃຊ້ຟອມໃບຢັ້ງຢືນທີ່ຕັ້ງສຳນັກງານ ຫລື ສາຂາຂອງວິສາຫະກິດ ແລະ ການແຈ້ງຂຶ້ນທະບຽນວິສາຫະກິດໃນກິດຈະການຂອງຂະແໜງທະນາຄານ)**

## 1.6



ປະຈຸບັນ ຂັ້ນຕອນການເຂົ້າຮັບຟັງປະຖົມນິເທດກ່ຽວກັບການປະຕິບັດພັນທະອາກອນຕ່າງໆບໍ່ແມ່ນຂັ້ນຕອນພາກບັງຄັບ. ກະຊວງການເງິນ ໄດ້ອອກແຈ້ງການ ຖ້າວິສາຫະກິດໃດ ບໍ່ເຂົ້າຮັບຟັງການປະຖົມນິເທດນຳຂະແໜງການສ່ວຍສາອາກອນ ພາຍໃນກຳນົດເວລາ 30 ວັນ ນັບແຕ່ວັນທີ່ໄດ້ອອກທະບຽນ ຖືວ່າວິສາຫະກິດດັ່ງກ່າວ ຮັບຊາບ ແລະ ເຂົ້າໃຈໃນການຈັດຕັ້ງປະຕິບັດ ມາດຕະການທີ່ຕິດພັນກັບການມອບພັນທະອາກອນ ຕາມລະບຽບ ແລະ ກົດໝາຍແລ້ວ.

**(ອີງຕາມ ແຈ້ງການ ສະບັບເລກທີ 0489/ ຫກງ, ລົງວັນທີ 05 ມີນາ 2019 ເລື່ອງການອອກເລກປະຈຳຕົວຜູ້ເສຍອາກອນ)**

## 1.7




ພິຈາລະນາຂຶ້ນທະບຽນປະກັນສັງຄົມ ແລະ ອອກໃບຢັ້ງຢືນການຂຶ້ນທະບຽນໃຫ້ຫົວໜ່ວຍແຮງງານໄດ້ໄວຍິ່ງຂຶ້ນ ເຫຼືອພຽງແຕ່ 1-2 ວັນ

**(ອີງຕາມ ຄຳແນະນຳ ສະບັບເລກທີ 1206/ຮສສ, ລົງວັນທີ 23 ເມສາ 2019 ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍປະກັນສັງຄົມ (ສະບັບປັບປຸງ))**

2.

# ການຂໍອະນຸຍາດກໍ່ສ້າງ

ກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ປັບປຸງລະບຽບຄຸ້ມຄອງການກໍ່ສ້າງ ຊຶ່ງມີແຜນຮັບຮອງໃນເດືອນ ມັງກອນ 2019. ລະບຽບການນີ້ ແມ່ນໄດ້ຕັດຮອນຂັ້ນຕອນໃຫ້ສັ້ນເຂົ້າ ແລະ ລົບລ້າງເອກະສານປະກອບການຂໍໃບອະນຸຍາດປຸກສ້າງທີ່ບໍ່ຈຳເປັນ ແລະ ຊ້ຳຊ້ອນ ແລະ ກຳນົດຂອບເຂດເວລາໃນການໃຫ້ບໍລິການຂອງການອອກໃບອະນຸຍາດປຸກສ້າງນຳອີກ.




## 2.1

ພິມປຶ້ມລະບຽບ, ແຜ່ນພັບ ແລະ ໂປສເຕີ ກ່ຽວກັບຂໍ້ແນະນຳສຳລັບຜູ້ຂໍອະນຸຍາດກໍ່ສ້າງ ໃນເດືອນ ເມສາ 2019.

**(ອີງຕາມຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຄຸ້ມຄອງການປຸກສ້າງ, ສະບັບເລກທີ 2241/ຍທຂ, ລົງວັນທີ 31 ມັງກອນ 2019)**

## 2.2

**11-7**

ຈາກ 11ຂັ້ນຕອນ
ເຫຼືອ 7 ຂັ້ນຕອນ,
ບໍ່ເກີນ 30 ວັນ

ຫຼຸດຂັ້ນຕອນການຂໍອະນຸຍາດຈາກ 11 ຂັ້ນຕອນ ເປັນ 7 ຂັ້ນຕອນ, ລວມເວລາບໍ່ເກີນ 30 ວັນ.

## 2.3

ເອົາແບບຟອມການຂໍອະນຸຍາດກໍ່ສ້າງລົງເວັບໄຊ ໃຫ້ສາມາດດາວໂລດໄດ້
https://www.mpwt.gov.la

# 3.

# ການຂໍຕິດຕັ້ງໄຟຟ້າ



**6-3** ຈາກ 6 ຂັ້ນຕອນ ເຫຼືອ 3 ຂັ້ນຕອນ

## 3.1



**35** ບໍ່ເກີນ 35 ວັນ ລັດຖະການ

ລັດວິສາຫະກິດໄຟຟ້າລາວຫຼຸດຂັ້ນຕອນການບໍລິການຕິດຕັ້ງໝໍ້ນັບໄຟ, ກໍ່ສ້າງຕາຂ່າຍ 22/0.4 KV ແລະ ຕິດຕັ້ງໝໍ້ແປງໄຟຟ້າ ໃນທົ່ວປະເທດ ຈາກ 6 ຂັ້ນຕອນ ເຫຼືອ 3 ຂັ້ນຕອນ

ການຂໍຕິດຕັ້ງໝໍ້ນັບໄຟ ທີ່ມີການກໍ່ສ້າງຕາຂ່າຍແຮງກາງ 22KV ລວງຍາວບໍ່ເກີນ 2Km, ຕິດຕັ້ງ ໝໍ້ແປງ ແລະ ກໍ່ສ້າງຕາຂ່າຍແຮງຕໍ່າ 0.4KV ລວງຍາວບໍ່ເກີນ 500m ໃຊ້ເວລາລວມບໍ່ເກີນ 35 ວັນ ລັດຖະການ

**(ອີງຕາມຂໍ້ກຳນົດວ່າດ້ວຍການປັບປຸງຂັ້ນຕອນການບໍລິການຕິດຕັ້ງໝໍ້ນັບໄຟ, ການກໍ່ສ້າງຕາຂ່າຍໄຟຟ້າ ແລະ ຕິດຕັ້ງໝໍ້ແປງໄຟຟ້າ, ສະບັບເລກທີ 3578/ຟຟລ, ລົງວັນທີ 7 ກັນຍາ 2018)**

## 3.2



**7** ບໍ່ເກີນ 7 ວັນ ລັດຖະການ

ການຂໍຕິດຕັ້ງແຕ່ສະເພາະໝໍ້ນັບໄຟ ໂດຍບໍ່ມີການກໍ່ສ້າງຕາຂ່າຍ ໃຊ້ເວລາບໍ່ເກີນ 7 ວັນ ລັດຖະການ

## 3.3



**15** ບໍ່ເກີນ 15 ວັນ ລັດຖະການ

ການຂໍຕິດຕັ້ງໝໍ້ນັບໄຟທີ່ມີການຕິດຕັ້ງໝໍ້ແປງ ໃຊ້ເວລາບໍ່ເກີນ15 ວັນ ລັດຖະການ

## 3.4



ລັດວິສາຫະກິດໄຟຟ້າລາວ ໄດ້ປຶກສາຫາລືກັບບັນດາ ບໍລິສັດບໍລິການການຕິດຕັ້ງໄຟຟ້າ ໃຫ້ປັບປຸງການບໍລິການຕິດຕັ້ງໄຟຟ້າໃຫ້ລູກຄ້າຂອງຕົນໄວຂຶ້ນກວ່າເກົ່າ ແລະ ຈະສືບຕໍ່ປຶກສາຫາລື ແລະ ຫາແນວທາງແກ້ໄຂຮ່ວມກັນ.

## 3.5



ທ່ານສາມາດພົວພັນເອົາເອກະສານຂໍນຳໃຊ້ໄຟຟ້າ ແລະ ຍື່ນເອກະສານ ແລະ ຊຳລະຄ່າບໍລິການຕິດຕັ້ງໝໍ້ໄຟ ໄດ້ທັງ 6 ສາຂາ ແລະ ສູນບໍລິການຮັບເງິນຄ່າກະແສໄຟຟ້າ ທີ່ນະຄອນຫຼວງວຽງຈັນ

## 3.6




ໄດ້ມີສູນບໍລິການສ້ອມແປງໄຟຟ້າສຸກເສີນ, ສູນສາຍດ່ວນ 1199 (Call Center) ແລະ ມີໂຄງການ Smart meter (ໝໍ້ນັບໄຟແບບທັນສະໄໝ, ສາມາດ ເກັບກຳ ແລະ ສົ່ງຂໍ້ມູນການນຳໃຊ້ໄຟຟ້າແບບອັດຕະໂນມັດ)

# 4.

# ການຈົດທະບຽນຊັບສິນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໄດ້ສ້າງແຜນປັບປຸງບັນດານິຕິກຳທີ່ຕິດພັນກັບການ ຄຸ້ມຄອງທີ່ດິນ ແລະ ການບໍລິການ ດັ່ງນີ້:

## 4.1

ໄດ້ພັດທະນາລະບົບການຄຸ້ມຄອງບໍລິຫານທີ່ດິນໃຫ້ທັນເປັນທັນສະໄໝ ໂດຍສະເພາະລະບົບຖານຂໍ້ມູນອີເລັກໂຕຣນິກໃນທົ່ວປະເທດ ຊຶ່ງໄດ້ພັດທະນາ ແລະ ໄດ້ນຳໃຊ້ ລະບົບດີຈິຕອນ ລາວແລນເລັກ (Digital Lao Land Reg) ເຂົ້າໃນການຂຶ້ນທະບຽນ ແລະ ຈົດທະບຽນນິຕິກຳກ່ຽວກັບທີ່ດິນ ແລະ ສາມາດເຊື່ອມກັບກ້ອງວັດແທກທີ່ດິນແບບທັນສະໄໝ ຫຼື ກ້ອງ GNSS RTK. ໃນປະຈຸບັນມີກ້ອງ GNSS RTK ຈຳນວນ 103 ຊຸດ ທີ່ຖືກນຳໃຊ້ໃນຂອບເຂດທົ່ວປະເທດ ແລະ ຍັງສາມາດເຊື່ອມກັບສະຖານີຮັບສັນຍານດາວທຽມ (Core Station) ທີ່ໄດ້ຕິດຕັ້ງຢູ່ບັນດາແຂວງແລ້ວ ຈຳນວນ 17 ສະຖານີ ແລະ ໃນປີ 2019 ຈະສ້າງສະຖານີດັ່ງກ່າວຕື່ມອີກ 21 ສະຖານີ.

## 4.2

ໄດ້ເອົານິຕິກຳ, ລະບຽບກົດໝາຍ, ມາດຕະຖານການໃຫ້ບໍລິການ, ເຂດປະເມີນມູນຄ່າທີ່ດິນ ແລະ ສິ່ງປຸກສ້າງ, ວິທີ ແລະ ການຄິດໄລ່ຄ່າທຳນຽມ, ການຮ້ອງຟ້ອງ ແລະ ແບບຟອມການຊື້-ຂາຍ, ການຈົດທະບຽນຊັບສິນ ແລະ ອື່ນໆ ລົງເວບໄຊຂອງກະຊວງ (www.monre.gov.la).

## 4.3

ໄດ້ສ້າງສູນບໍລິການທີ່ດິນ ຢູ່ 3 ແຂວງ 6 ຈຸດ ເພື່ອໃຫ້ເປັນລະບົບບໍລິການປະຕູດຽວ ແລະ ການຊຳລະຄ່າໃຊ້ຈ່າຍຕ່າງໆ ຜ່ານລະບົບທະນາຄານ, ຄາດວ່າຈະໃຫ້ການບໍລິການໄດ້ 2 ແຂວງ ຄື: ນະຄອນຫຼວງວຽງຈັນ ແລະ ແຂວງໄຊຍະບູລີ.

# 5.

# ການເຂົ້າເຖິງສິນເຊື່ອ

......................

## 5.1

ທະນາຄານ ແຫ່ງ ສປປ ລາວ ໄດ້ສ້າງແຜນປັບປຸງການເຂົ້າຫາສິນເຊື່ອ ຄື:

- ພາຍໃນ 1-2 ປີໂດຍຈະປັບປຸງກອບນິຕິກຳທີ່ກ່ຽວຂ້ອງຮ່ວມກັບກະຊວງຍຸຕິທຳ ເຊັ່ນ: ກົດໝາຍວ່າດ້ວຍການຄ້ຳປະກັນທາງສັນຍາ ແລະ ກົດໝາຍວ່າດ້ວຍການລົ້ມລະລາຍ

- ຈະສ້າງຖານຂໍ້ມູນຂ່າວສານດ້ານສິນເຊື່ອໃຫ້ກວ້າງອອກ ໂດຍລວມເອົາບັນດາຂໍ້ມູນດ້ານສາທາລະນູປະໂພກ (ໄຟຟ້າ, ນ້ຳປະປາ, ແລະ ໂທລະສັບ) ເພື່ອສ້າງຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ.

## 5.2

ຫ້ອງການຈົດທະບຽນຄ້ຳປະກັນສຳລັບສັງຫາລິມະຊັບທີ່ກະຊວງການເງິນໄດ້ຂະຫຍາຍການບໍລິການໄປທົ່ວປະເທດ ຄື:

- ນຳໃຊ້ການຈົດທະບຽນຜ່ານລະບົບອອນລາຍ ຜ່ານເວບໄຊ https://www.mof.gov.la/str/en_index.html .

- ການບໍລິການຄ້ຳປະກັນການໃຫ້ສິນເຊື່ອດ້ວຍຊັບສິນທີ່ເປັນສັງຫາລິມະຊັບໄດ້ເປີດການບໍລິການແຕ່ທ້າຍ ປີ 2013 ເປັນຕົ້ນມາ. ມີຜູ້ມາຈົດທະບຽນຕົ້ນຕໍ ແມ່ນ ທະນາຄານ, ບໍລິສັດສິນເຊື່ອ ແລະ ສະຖາບັນການເງິນຈຸລະພາກຊັບສິນ ແລະ ຊັບສິນທີ່ເປັນສັງຫາລິມະຊັບ ທີ່ຮັບເອົາແມ່ນ ຍານພາຫະນະ, ເຄື່ອງຈັກ ແລະ ບັນຊີໜີ້ຕ້ອງຮັບ. ມາຮອດປະຈຸບັນ ມູນຄ່າສິນເຊື່ອທີ່ຄ້ຳປະກັນດ້ວຍສັງຫາລິມະຊັບທີ່ຈົດທະບຽນ ແມ່ນ ຫຼາຍກວ່າ 30 ຕື້ ໂດລາສະຫະລັດ.

......................

# 6.

# ການປົກປ້ອງຜູ້ລົງທຶນລາຍຍ່ອຍ

ຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ສຳເລັດການສ້າງ ແລະ ປັບປຸງນິຕິກຳທີ່ກ່ຽວຂ້ອງກັບການປົກປ້ອງຜູ້ລົງທຶນລາຍຍ່ອຍໃນຂົງເຂດວຽກງານຫຼັກຊັບ ເຊັ່ນ: ສ້າງຄຳແນະນຳກ່ຽວກັບການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນ, ປັບປຸງລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ, ປັບປຸງຂໍ້ຕົກລົງວ່າດ້ວຍສະພາບໍລິຫານຂອງບໍລິສັດຈົດທະບຽນ, ປັບປຸງຄຳແນະນຳວ່າດ້ວຍການຈັດກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດຈົດທະບຽນ ແລະ ຢູ່ໃນຂັ້ນຕອນປັບປຸງກົດໝາຍວ່າດ້ວຍຫຼັກຊັບ ໃຫ້ໄດ້ຮັບການຮັບຮອງພາຍໃນປີ 2019.

ນິຕິກຳທີ່ມີຜົນບັງຄັບໃຊ້ໃນປະຈຸບັນທີ່ກ່ຽວຂ້ອງກັບການປົກປ້ອງຜູ້ລົງທຶນລາຍຍ່ອຍໃນບໍລິສັດຈົດທະບຽນລວມມີ:

## 6.1

ກົດໝາຍວ່າດ້ວຍຫຼັກຊັບ ເລກທີ 21/ສພຊ ລົງວັນທີ 10 ທັນວາ 2012

## 6.2

ຂໍ້ຕົກລົງວ່າດ້ວຍລາຍການທີ່ກ່ຽວພັນ
ເລກທີ 0023/ຄຄຊ, ລົງວັນທີ 26 ຕຸລາ 2016

## 6.3

ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ
ເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019

## 6.4

ຂໍ້ຕົກລົງວ່າດ້ວຍສະພາບໍລິຫານ
ເລກທີ 10/ຄຄຊ, ລົງວັນທີ 26 ເມສາ 2019

## 6.5

ຄຳແນະນຳວ່າດ້ວຍການຈັດກອງປະຊຸມຜູ້ຖືຮຸ້ນ
ເລກທີ 0001/ຄຄຊ ລົງວັນທີ 30 ເມສາ 2019

## 6.6

ຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານ
ສະບັບລົງວັນທີ 24 ເມສາ 2019

**ນິຕິກຳທີ່ກ່ຽວຂ້ອງສາມາດຊອກໄດ້ທີ່:**
**www.lsc.gov.la**


TAX

# 7.

## ການຊຳລະອາກອນ

ກະຊວງການເງິນ ໄດ້ປັບປຸງ ການຊຳລະອາກອນ ໃຫ້ມີຄວາມສະດວກ, ໂປ່ງໃສ ແລະ ວ່ອງໄວຂຶ້ນ ເຊັ່ນ:

### 7.1

ອອກເລກປະຈຳຕົວຜູ້ເສຍອາກອນພ້ອມກັນກັບໃບທະບຽນວິສາຫະກິດ ໂດຍການນຳໃຊ້ລະບົບຄຸ້ມຄອງການຈັດເກັບລາຍຮັບສ່ວຍສາອາກອນຜ່ານລະບົບ TaxRIS

### 7.2

ແຈ້ງເສຍອາກອນທາງອີເລັກໂທນິກຜ່ານລະບົບ TaxRIS (http://taxservice.mof.gov.la)

~~58~~ 26

ຈາກ 58 ຫ້ອງ
ເຫຼືອ
26 ຫ້ອງ

### 7.3

ໄດ້ມີການຊຳລະອາກອນແບບທັນສະໄໝ ຫຼື EasyTax ເຊິ່ງຈະຊ່ວຍໃຫ້ຊຳລະເງິນອາກອນປະເພດຕ່າງໆ ຜ່ານລະບົບທະນາຄານ ໂດຍນຳໃຊ້ຊ່ອງທາງຕ່າງໆທີ່ມີຂອງທະນາຄານເຊັ່ນ: Counter Service, Mobile Banking, Internet Banking, SMS, ATM

### 7.4

ປັບປຸງໃບແຈ້ງອາກອນມູນຄ່າເພີ່ມໃຫ້ສັ້ນເຂົ້າ ໂດຍຫຼຸດຈຳນວນຫ້ອງຂໍ້ມູນທີ່ຕ້ອງຕື່ມໃສ່ ຈາກ 58 ຫ້ອງ ເຫຼືອພຽງ 26 ຫ້ອງ

# 8.

# ການຄ້າ ລະຫວ່າງປະເທດ

ຄະນະກຳມະການຊີ້ນຳລວມອຳນວຍຄວາມສະດວກທາງດ້ານການຄ້າ ໄດ້ຕັດຮອນຂັ້ນຕອນ ແລະ ເວລາ ໃນການປະກອບເອກະສານນຳເຂົ້າ ແລະ ສົ່ງອອກ ໂດຍສະເພາະແມ່ນສິນຄ້າທີ່ຕິດພັນກັບການປະເມີນຕົວຊີ້ວັດການຄ້າລະຫວ່າງປະເທດ ຄື: ການນຳເຂົ້າຊິ້ນສ່ວນຍານພາຫະນະ ແລະ ການສົ່ງອອກແຮ່ທາດດັ່ງຕໍ່ໄປນີ້:

## 8.1

ອອກໃບອະນຸຍາດນຳເຂົ້າຊິ້ນສ່ວນຍານພາຫະນະ ເພື່ອມາປະກອບ ຫຼື ຜະລິດຢູ່ໂຮງງານ ຢູ່ບ່ອນດຽວຄື ກົມອຸດສາຫະກຳ ແລະ ຫັດຖະກຳ ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍໃຊ້ເວລາພຽງ 03 ວັນ

**(ອີງຕາມຄຳສັ່ງເລກທີ 0535/ອຄ.ກຂອ, ລົງວັນທີ 10 ເມສາ 2017)**

## 8.2

ອອກໜັງສືລັດຖະການຂອງກົມພາສີ ຫາ ດ່ານພາສີ ກ່ຽວກັບການສົ່ງອອກແຮ່ທາດ ຈາກທຸກໆຄັ້ງທີ່ມີການສົ່ງອອກ ມາເປັນຄັ້ງດຽວ (ຄັ້ງທຳອິດ) ຈົນກວ່າຈະມີການປ່ຽນແປງສັນຍາສຳປະທານ ແລະ ໃຊ້ເວລາໃນການດຳເນີນເອກະສານ ພຽງ 3 ວັນ

**(ອີງຕາມ ແຈ້ງການ ເລກທີ 01616/ກພສ, ລົງວັນທີ 02 ເມສາ 2018 ຂອງ ກົມພາສີ ກະຊວງການເງິນ)**

## 8.3

= NO VAT

ຍົກເວັ້ນການເກັບອາກອນມູນຄ່າເພີ່ມ ສຳລັບແຮ່ທາດສົ່ງອອກ

**(ອີງຕາມກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ (ສະບັບປັບປຸງ) ເລກທີ 48/ສພຊ)**

## 8.4

3 → 1

ຈາກ 3 ວັນ ເຫຼືອ 1 ວັນ

ປັບປຸງຂັ້ນຕອນດຳເນີນເອກະສານຂອງກະຊວງທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ ກະຊວງພະລັງງານ ແລະ ບໍ່ແຮ່ ຈາກທີ່ໃຊ້ເວລາ 03 ວັນມາເປັນ 01 ວັນ (ເອກະສານສຳລັບການຈຳໜ່າຍ ແລະ ສົ່ງອອກແຮ່ທາດ)

**(ອີງໃສ່ແຈ້ງການເລກທີ 0011/ກຄຣ, ລົງວັນທີ 04 ມັງກອນ 2019)**

## 8.5

ກະຊວງອຸດສາຫະກຳ ແລະ ການຄ້າ (ການສ້າງມາດຕະຖານການບໍລິການ ຫຼື Service Charter) ສຳລັບການນຳເຂົ້າ ແລະ ສົ່ງອອກ ໂດຍວາງເປົ້າໝາຍເຮັດໃຫ້ຂັ້ນຕອນ, ເວລາ ແລະ ເອກະສານໃນການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ໃຫ້ຫຼຸດລົງ 50% ພາຍໃນປີ 2019 ແລະ ຫັນການບໍລິການເປັນເອເລັກໂຕຣນິກຢ່າງເຕັມສ່ວນ

**(ອີງໃສ່ແຈ້ງການ ເລກທີ 4186/ກຂອ, ລົງວັນທີ 12 ກັນຍາ 2018)**

9.

# ການບັງຄັບໃຊ້ສັນຍາ

ພາຍໃນປີ 2019 ຕາມແຜນການສ້າງ ແລະ ປັບປຸງກົດໝາຍທີ່ໄດ້ຮັບຮອງຈາກສະພາແຫ່ງຊາດ, ກະຊວງຍຸຕິທຳ ປະສານສົມທົບກັບ ສານປະຊາຊົນສູງສຸດ ແລະ ຂະແໜງການກ່ຽວຂ້ອງພະຍາຍາມສູ້ຊົນປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ຄ່າທຳນຽມສານ, ການຄ້ຳປະກັນການປະຕິບັດສັນຍາ, ການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ສຳເລັດ ແລະ ອອກນິຕິກຳໃຕ້ກົດໝາຍ ເພື່ອອັດຊ່ອງຫວ່າງ ອຸດຕັນການປະຕິບັດສັນຍາ ແລະ ການດຳເນີນຄະດີຢູ່ສານ

# 10.

# ການແກ້ໄຂ ການລົ້ມລະລາຍ

ຕາມແຜນການປັບປຸງ ແລະ ກໍ່ສ້າງກົດໝາຍທີ່ໄດ້ຮັບຮອງຈາກສະພາແຫ່ງຊາດ, ກະຊວງຍຸຕິທຳ ປະສານສົມທົບກັບ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງຍຸຕິທຳ ໄດ້ປັບປຸງກົດຫມາຍວ່າດ້ວຍການລົ້ມລະລາຍຂອງວິສາຫະກິດ ແລະ ຄາດຄະເນວ່າກົດຫມາຍດັ່ງກ່າວຈະໄດ້ຮັບການຮັບຮອງຈາກສະພາແຫ່ງຊາດໃນປີ 2019 ນີ້

**ກະຊວງແຜນການ ແລະ ການລົງທຶນ**
ກົມສົ່ງເສີມການລົງທຶນ
ພະແນກສົ່ງເສີມການລົງທຶນ
ຖະໜົນ ສຸພານຸວົງ, ເມືອງສີໂຄດຕະບອງ
ນະຄອນຫລວງວຽງຈັນ 01001, ສປປ ລາວ
http://www.investlaos.gov.la
ໂທ: +856 21 222691
ແຟັກສ: +856 21 254826

**ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**
ຖະໜົນ ໜອງບຶກ, ເມືອງສີໂຄດຕະບອງ
ນະຄອນຫລວງວຽງຈັນ, ສປປ ລາວ
http://www.monre.gov.la
ໂທ: +856 21 263799
ແຟັກສ: +856 21 263799
Email: leevameng.bouapao112@gmail.com

**ບໍລິສັດ ລັດວິສາຫະກິດໄຟຟ້າລາວ**
ນະຄອນຫລວງວຽງຈັນ, ສປປ ລາວ
http://www.edl.com.la
ໂທ: +856 21 316094, 021 316133
Email: edlmdo@edl.com.la

**ກະຊວງການເງິນ**
ກົມສ່ວຍສາອາກອນ
ນະຄອນຫລວງວຽງຈັນ, ສປປ ລາວ
www.mof.gov.la
ໂທ: +856 21 911336

**ກະຊວງໂຍທາທິການ ແລະ ຂົນສົ່ງ**
ກົມເຄຫາ ແລະ ຜັງເມືອງ
ນະຄອນຫລວງວຽງຈັນ, ສປປ ລາວ
http://www.mpwt.gov.la
ໂທ: +856 21 412282-83

**ຄະນະກຳມະການຄຸ້ມຄອງຫລັກຊັບ**
ບ້ານໂພນສະອາດ, ເມືອງໄຊເສດຖາ
ນະຄອນຫລວງວຽງຈັນ, ສປປ ລາວ
www.lsc.gov.la
ໂທ: +856 21 217770
ແຟັກສ: +856 21 217806
Email: lsco@lsc.gov.la

**ທະນາຄານແຫ່ງ ສປປ ລາວ**
ຖະໜົນ ຍອນເນ, ນະຄອນຫລວງວຽງຈັນ
http://www.bol.gov.la
ໂທ: +856 21 213109, 213110
ແຟັກສ: +856 21 254826
Email:BOL@bol.gov.la

ທ່ານສາມາດຫາຂໍ້ມູນເພີ່ມເຕີມໄດ້ຈາກ:

Doing Business Reforms in Laos